ພິທີເຊັນສັນຍາວ່າດ້ວຍ
ການໃຫ້ບໍລິການທີ່ປຶກສາດ້ານການເງິນ ໃນການອອກຈຳໜ່າຍຮຸ້ນ ເພີ່ມທຶນໃຫ້ແກ່ຜູ້ຖືຮຸ້ນເດີມ ແລະ ມອບຊື້ນທົ່ວໄປ (RO&PO)



ໃນຕອນເຊົ້າຂອງວັນທີ 03 ກໍລະກົດ 2025 ບໍລິສັດຫຼັກຊັບ ລາວ-ຈີນ ມະຫາຊົນ (ບລຈ) ແລະ ທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ) ໄດ້ຈັດພິທີເຊັນສັນຍາວ່າດ້ວຍການໃຫ້ບໍລິການທີ່ປຶກສາດ້ານການເງິນ ໃນ ການອອກຈຳໜ່າຍຮຸ້ນເພີ່ມທຶນໃຫ້ແກ່ຜູ້ຖືຮຸ້ນເດີມ ແລະ ມອບຊື້ນທົ່ວໄປ (RO/PO) ຂອງ ທຄຕລ.

ຕາງໜ້າຈາກທັງສອງຝ່າຍເພື່ອລົງນາມໃນສັນຍາໂດຍ ທ່ານ ລົນລີ ຜູ້ອຳນວຍການ ບລຈ ແລະ ທ່ານ ນ. ສາຍສະ ໝອນ ຈັນທະຈັກ ຜູ້ອຳນວຍການໃຫຍ່ ທຄຕລ, ຊຶ່ງໄດ້ຮັບກຽມເຂົ້າຮ່ວມເປັນສັກຂີພະຍານໂດຍ ທ່ານ ນ. ແພງສີ ແພງ ເມືອງ ຫົວໜ້າສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ, ທ່ານ ສຽວສະຫວາດ ທິລະກຸນ ຜູ້ອຳນວຍການໃຫຍ່ ຕະຫຼາດຫຼັກຊັບລາວ, ທ່ານ ປະສົມເພັດ ຄຳຕັນ ຮອງຫົວໜ້າກົມຄຸ້ມຄອງວິສາຫະກິດລັດລົງທຶນ ແລະ ການປະກັນໄພ, ພາກສ່ວນທີ່ກ່ຽວຂ້ອງຂອງທະນາຄານແຫ່ງ ສປປ ລາວ, ພ້ອມດ້ວຍຄະນະບໍລິຫານຈາກພາກສ່ວນຕ່າງໆທີ່ກ່ຽວຂ້ອງ ແລະ ສື່ມວນຊົນຈາກຫຼາຍພາກສ່ວນ.

ການຮ່ວມມືລະຫວ່າງ ບລຈ ແລະ ທຄຕລ ແມ່ນໄດ້ເລີ່ມສາຍພົວພັນຕັ້ງແຕ່ປີ 2013 ທັງສອງຝ່າຍໄດ້ເຊັນ MOU ວ່າດ້ວຍການຮ່ວມມືຍຸດທະສາດເປັນຕົ້ນມາ, ພ້ອມກັນນັ້ນ ທຄຕລ ທັງເປັນຕົວແທນຊາລະສະສາງດ້ານຫຼັກຊັບ ໃຫ້ແກ່ ບລຈ ຈົນເຖິງປະຈຸບັນ. ນອກຈາກນີ້, ບລຈ ຍັງໄດ້ໃຫ້ການບໍລິການທີ່ປຶກສາດ້ານການເງິນໃຫ້ແກ່ ທຄຕລ ໃນການ ອອກຈຳໜ່າຍຮຸ້ນເພີ່ມທຶນໃຫ້ແກ່ຜູ້ຖືຮຸ້ນເດີມ ແລະ ມອບຊື້ນທົ່ວໄປ (RO/PO) ມາແລ້ວ 2 ຄັ້ງຄື: ໃນປີ 2017 ແລະ 2019.



ທ່ານ ນາງ ສາຍສະໝອນ ຈັນທະຈັກ ໄດ້ກ່າວວ່າ: ອີງຕາມຕົວເລກໃນເດືອນ 12/2024, ອັດຕາສ່ວນຄວາມພຽງພໍຂອງທຶນ (CAR Ratio) ຂອງ ທຄຕລ ໄດ້ຫຼຸດມາດຕະຖານທີ່ທະນາຄານແຫ່ງ ສປປ ລາວ ວາງໄວ້ຄື 8%. ສະນັ້ນ, ເພື່ອຍົກສູງຄວາມອາດສາມາດຂອງ ທຄຕລ ໃນການຂະຫຍາຍທຸລະກິດ ແລະ ຮັບປະກັນຄວາມໝັ້ນຄົງ ແລະ ຄວາມເຊື່ອໝັ້ນຕໍ່ ທຄຕລ, ສະພາບໍລິຫານ ແລະ ກອງປະຊຸມ ຜູ້ຖືຮຸ້ນຂອງ ທຄຕລ ຈຶ່ງໄດ້ຕົກລົງເຫັນດີໃຫ້ເພີ່ມທຶນຈຳນວນ 833 ຕື້ກີບ ຊຶ່ງຄາດໝາຍໃຫ້ສຳເລັດພາຍໃນປີ 2025 ນີ້. ການເພີ່ມທຶນຄັ້ງ ນີ້ ເປັນການເພີ່ມທຶນເພື່ອໃຫ້ ທຄຕລ ບັນລຸມາດຖານຄວາມພຽງພໍ ຂອງທຶນ ແລະ ຮັບປະກັນຄວາມໝັ້ນຄົງ.

ເພື່ອໃຫ້ສອດຄ່ອງກັບກົດໝາຍວ່າດ້ວຍຫຼັກຊັບ ແລະ ນິຕິກຳທີ່ກ່ຽວຂ້ອງໃນການເພີ່ມທຶນ, ທຄຕລ ຕ້ອງໄດ້ມີການວ່າຈ້າງບໍລິສັດທີ່ ປຶກສາທາງການເງິນ ຫຼື FA ເພື່ອດຳເນີນຂະບວນການເພີ່ມທຶນຈົນສຳເລັດ. ຜ່ານການພິຈາລະນາເຫັນວ່າ ບໍລິສັດຫຼັກຊັບ ລາວ-ຈີນ ມະຫາຊົນ ໄດ້ຮັບການຄັດເລືອກເປັນທີ່ປຶກສາດ້ານການເງິນ ແລະ ເປັນຜູ້ຄ້ຳປະກັນການອອກຈຳໜ່າຍຮຸ້ນເພີ່ມທຶນ RO/PO ໃນຄັ້ງນີ້.

ທ່ານ ລິນລີ ຜູ້ອຳນວຍການ ໄດ້ກ່າວວ່າ: ແຜນການອອກຈຳ ໜ່າຍຮຸ້ນເພີ່ມທຶນຂອງ ທຄຕລ ບໍ່ພຽງແຕ່ຈະສ້າງຄວາມໝັ້ນຄົງເທົ່ານັ້ນ, ແຕ່ຍັງຈະເປັນການປະກອບສ່ວນທີ່ສຳຄັນເຂົ້າໃນການພັດທະນາຕະຫຼາດທຶນ ແລະ ເສດຖະກິດຂອງ ສປປ ລາວ, ເປັນການຍົກລະດັບຄວາມເຊື່ອໝັ້ນຂອງຜູ້ລົງທຶນຕໍ່ລະບົບການເງິນຂອງ ສປປ ລາວ ແລະ ສົ່ງເສີມການລົງທຶນຈາກຕ່າງປະເທດ. ບລຈ ໃນຖານະເປັນທີ່ປຶກສາດ້ານການເງິນ ແລະ ເປັນຜູ້ຄ້ຳປະກັນການອອກຈຳໜ່າຍຮຸ້ນເພີ່ມທຶນ RO/PO ໃນຄັ້ງນີ້ມີຄວາມເຊື່ອໝັ້ນວ່າການຈັດຈຳໜ່າຍຮຸ້ນເພີ່ມທຶນໃນຄັ້ງນີ້ຈະປະສົບຜົນສຳເລັດຕາມແຜນການທີ່ວາງໄວ້.